# ການຮັບຄວາມຊ່ວຍເຫຼືອເລື່ອງໃບບິນຂອງທ່ານ / *Getting Help with Your Bill*

## ສັງລວມກ່ຽວກັບນະໂຍບາຍວ່າດ້ວຍການຊ່ວຍເຫຼືອດ້ານການເງິນຂອງ Texas Health

Texas Health Resources ແລະ ໂຮງໝໍໃນເຄືອຂອງເຂົາເຈົ້າສະເໜີໃຫ້ການຊ່ວຍເຫຼືອດ້ານການເງິນພາຍໃຕ້ນະໂຍບາຍວ່າດ້ວຍການຊ່ວຍເຫຼືອດ້ານການເງິນຂອງ Texas Health. ສິ່ງນີ້ອາດຈະນໍາໃຊ້ໄດ້ກັບທຸກຄົນທີ່ໄດ້ຮັບການບໍລິການໃນໂຮງໝໍຈາກ Texas Health ຫຼື ໂຮງໝໍໃນເຄືອ. ນະໂຍບາຍວ່າດ້ວຍການຊ່ວຍເຫຼືອດ້ານການເງິນ, ມີຄໍາຮ້ອງຂໍການຊ່ວຍເຫຼືອດ້ານການເງິນ ແລະ ສັງລວມແບບໃຊ້ພາສາທີ່ເຂົ້າໃຈງ່າຍໃຫ້ເປັນພາສາອັງກິດ ແລະ ພາສາສະເປນ ແລະ ພາສາອື່ນໆຖ້າຕ້ອງການ. ການຊ່ວຍເຫຼືອດ້ານການເງິນບໍ່ໄດ້ນໍາໃຊ້ກັບໃບບິນຈາກທ່ານໝໍ, ຫ້ອງແລັບພາຍນອກ ຫຼື ຜູ້ໃຫ້ບໍລິການດູແລເບິ່ງແຍງສຸຂະພາບອື່ນໆທີ່ບໍ່ແມ່ນໂຮງໝໍ.

## ຂ້ອຍມີສິດໄດ້ຮັບການຊ່ວຍເຫຼືອດ້ານການເງິນແນວໃດ?

ທ່ານສາມາດຮ້ອງຂໍເອົາຄວາມຊ່ວຍເຫຼືອເລື່ອງໃບບິນຂອງທ່ານໄດ້ທຸກເວລາໃນລະຫວ່າງການພັກເຊົາຢູ່ໂຮງໝໍ ຫຼື ຂະບວນການຮຽກເກັບເງິນຂອງທ່ານ. ພວກເຮົາຈະກໍານົດວ່າທ່ານຕິດໜີ້ຫຼາຍປານໃດ ໂດຍການກວດເບິ່ງລາຍຮັບ, ຊັບສິນ ຫຼື ຊັບພະຍາກອນອື່ນ. ຖ້າລາຍຮັບປະຈໍາປີຂອງທ່ານນ້ອຍກວ່າ ຫຼືເທົ່າກັບ 200% ຂອງເກນຄວາມທຸກຍາກຂອງລັດຖະບານກາງໃນປະຈຸບັນ, ທ່ານອາດຈະໄດ້ຮັບບາງການຊ່ວຍເຫຼືອດ້ານການເງິນ. ສາມາດເບິ່ງເກນຄວາມທຸກຍາກຂອງລັດຖະບານກາງໄດ້ທີ່: http://aspe.hhs.gov/poverty/index.cfm. ທ່ານອາດຈະມີຄຸນສົມບັດໄດ້ຮັບຄວາມຊ່ວຍເຫຼືອທັງໝົດ ຫຼື ບາງສ່ວນຂອງໃບບິນຄ່າປິ່ນປົວໃນໂຮງໝໍຂອງທ່ານ. ຄວາມຊ່ວຍເຫຼືອແມ່ນອີງໃສ່ອັດຕາເລື່ອນໄດ້ທີ່ພິຈາລະນາເຖິງລາຍຮັບປະຈໍາປີ ແລະຂະໜາດຄອບຄົວຂອງທ່ານ.

## ຂ້ອຍສາມາດຂໍເອົາການຊ່ວຍເຫຼືອທາງການເງິນໄດ້ແນວໃດ?

ເພື່ອຮັບສໍາເນົາຄໍາຮ້ອງຂໍການຊ່ວຍເຫຼືອດ້ານການເງິນຟຣີ ຫຼື ນະໂຍບາຍວ່າດ້ວຍການຊ່ວຍເຫຼືອດ້ານການເງິນ ໃຫ້ໄປທີ່: TexasHealth.org/Financial-Assistance.

ໃນໜ້າເວັບນີ້, ຍັງມີລິ້ງໃຫ້ສະໝັກອອນລາຍຜ່ານໜ້າເວັບ MyChart ຂອງພວກເຮົາ.

ນອກນັ້ນ ທ່ານຍັງສາມາດໄປເອົາສໍາເນົາສະບັບເຈ້ຍຟຣີໄດ້, ຂໍເອົາສໍາເນົາຟຣີທາງໄປສະນີ ຫຼື ຮັບຄວາມຊ່ວຍເຫຼືອເລື່ອງການຮ້ອງຂໍດ້ວຍຕົນເອງຢູ່ທີ່ໂຮງໝໍ Texas Health ທຸກແຫ່ງຢູ່ພະແນກຮັບຄົນເຈັບ ຫຼື ໂດຍການໄປທີ່ Central Business Office (ຕາມການນັດໝາຍເທົ່ານັ້ນ). ພະແນກບໍລິການລູກຄ້າຂອງພວກເຮົາສາມາດຊ່ວຍທ່ານກໍານົດເວລາການນັດໝາຍ ຫຼື ຊ່ວຍຕອບຄໍາຖາມຕ່າງໆກ່ຽວກັບນະໂຍບາຍການຊ່ວຍເຫຼືອດ້ານການເງິນ ຫຼື ຂັ້ນຕອນການສະໝັກຂໍໄດ້ໂດຍການໂທຫາເບີ 800.890.6034.

## ເອກະສານ

ທ່ານມີຄວາມຮັບຜິດຊອບສໍາລັບການສະໜອງໃຫ້ຂໍ້ມູນກ່ຽວກັບຜົນປະໂຫຍດດ້ານສຸຂະພາບ, ລາຍຮັບ, ຊັບສິນຂອງທ່ານ ແລະ ເອກະສານອື່ນໆໃດໜຶ່ງທີ່ຈະຊ່ວຍສະແດງໃຫ້ເຫັນວ່າທ່ານມີຄຸນສົມບັດ. ເອກະສານອາດຈະລວມມີໃບລາຍງານບັນຊີທະນາຄານ, ແບບຟອມອາກອນລາຍໄດ້, ຂອັ້ນໃບເຊັກ ຫຼື ຂໍ້ມູນອື່ນ.

## ການດູແລເບິ່ງແຍງສຸກເສີນ ແລະ ຈໍາເປັນທາງການແພດ

ຖ້າທ່ານມີຄຸນສົມບັດໄດ້ຮັບຄວາມຊ່ວຍເຫຼືອເລື່ອງໃບບິນຂອງທ່ານ, ທ່ານຈະບໍ່ຖືກຮຽກເກັບເງິນສໍາລັບການດູແລເບິ່ງແຍງສຸກເສີນ ຫຼື ຈໍາເປັນທາງການແພດຫຼາຍກວ່າຈໍານວນເງິນທີ່ຮຽກເກັບໂດຍທົ່ວໄປນໍາຄົນທີ່ມີຄວາມຄຸ້ມຄອງສໍາລັບການດູແລເບິ່ງແຍງປະເພດດຽວກັນ. ເພື່ອກໍານົດຈໍານວນເງິນທີ່ຮຽກເກັບໂດຍທົ່ວໄປ ພວກເຮົາໃຊ້ວິທີການເບິ່ງຄືນ (ພວກເຮົາປຽບທຽບຈໍານວນເງິນທີ່ຈ່າຍໂດຍຄົນເຈັບທີ່ໄດ້ຮັບຄວາມຄຸ້ມຄອງ ແລະ ບໍລິສັດປະກັນໄພຂອງເຂົາເຈົ້າໃນປີກ່ອນນີ້).

## ກິດຈະກໍາເກັບໜີ້

ໃບບິນທີ່ບໍ່ໄດ້ຈ່າຍເປັນເວລາ 130 ມື້ຈາກວັນທີອອກໂຮງໝໍອາດຈະຖືກໂອນຍ້າຍໄປຍັງໜ່ວຍເກັບໜີ້ພາຍນອກ. ທ່ານ ຫຼື ຜູ້ຄໍ້າປະກັນສາມາດຂໍເອົາຄວາມຊ່ວຍເຫຼືອເລື່ອງໃບບິນຂອງທ່ານໄດ້ທຸກເວລາໃນລະຫວ່າງຂະບວນການເກັບໜີ້ ໂດຍການຕິດຕໍ່ຝ່າຍບໍລິການລູກຄ້າທີ່ເບີ **800-890-6034**.

Texas Health

TLC 07/21 THR.LAS_LAO

ທ່ານໝໍໃນບຸກຄະລາກອນທາງການແພດປະຕິບັດຢ່າງເປັນອິດສະຫຼະ ແລະ ບໍ່ແມ່ນພະນັກງານ ຫຼື ຕົວແທນຂອງໂຮງໝໍຂອງ Texas Health ຫຼື Texas Health Resources.